# ບົດສະຫຼຸບນະໂຍບາຍການຊ່ວຍເຫຼືອດ້ານການເງິນທາງການແພດ

ໂຄງການ ຊ່ວຍເຫຼືອທາງການເງິນສຳລັບການປິ່ນປົວພະຍາດ (Medical Financial Assistance, MFA) ຂອງ Kaiser Permanente ໃຫ້ການຊ່ວຍເຫຼືອດ້ານການເງິນ ໃຫ້ແກ່ຄົນເຈັບທີ່ມີຄຸນສົມບັດພຽງພໍ ທີ່ຕ້ອງການຄວາມຊ່ວຍເຫຼືອໃນການຈ່າຍຄ່າປິ່ນປົວສຸກເສີນ ຫຼື ມີຄວາມຈຳເປັນທາງການແພດ ທີ່ພວກເຂົາໄດ້ຮັບໃນສະຖານທີ່ປິ່ນປົວຂອງ Kaiser Permanente ຫຼື ໂດຍຜູ້ໃຫ້ບໍລິການປິ່ນປົວຂອງ Kaiser Permanente. ຄົນເຈັບສາມາດສະໝັກເຂົ້າຮ່ວມໂຄງການ MFA ດ້ວຍຫຼາຍຊ່ອງທາງ ລວມທັງທາງອອນລາຍ, ດ້ວຍຕົນເອງ, ທາງໂທລະສັບ ຫຼື ໂດຍການຕື່ມຂໍ້ມູນ ແລະ ການຍື່ນໃບສະໝັກ. ຄົນເຈັບຕ້ອງບັນລຸໄດ້ຕາມເງື່ອນໄຂໃນການມີສິດໄດ້ຮັບຕ່າງໆຢູ່ຂ້າງລຸ່ມນີ້ ເພື່ອເຮັດໃຫ້ມີຄຸນສົມບັດພຽງພໍ.

**ແມ່ນໃຜທີ່ມີສິດເຂົ້າຮ່ວມໂຄງການ Financial Assistance ແລະ ມີເງື່ອນໄຂທີ່ຕ້ອງການຫຍັງແດ່?**

ໂຄງການດັ່ງກ່າວຊ່ວຍເຫຼືອຄົນເຈັບທີ່ມີລາຍໄດ້ຕ່ຳ, ບໍ່ມີປະກັນໄພ ຫຼື ດ້ອຍໂອກາດ ທີ່ຕ້ອງການຄວາມຊ່ວຍເຫຼືອໃນການຈ່າຍຄ່າດູແລທາງການແພດທັງໝົດ ຫຼື ບາງສ່ວນ. ໂດຍທົ່ວໄປແລ້ວ, ຄົນເຈັບມີສິດເຂົ້າຮ່ວມໂຄງການຊ່ວຍເຫຼືອທາງການເງິນ ເມື່ອລາຍໄດ້ທັງໝົດຂອງຄົວເຮືອນຂອງພວກເຂົາແມ່ນຢູ່ທີ່ ຫຼື ຕ່ຳກວ່າ 300% ຂອງຄຳແນະນຳກ່ຽວກັບຄວາມທຸກຍາກຂອງລັດຖະບານກາງ (Federal Poverty Guidelines, FPG) ຫຼື ມີຄ່າໃຊ້ຈ່າຍດ້ານການປິ່ນປົວທີ່ສູງກວ່າປົກກະຕິ. ຄົນເຈັບຄວນປຶກສາກັບທີ່ປຶກສາທາງດ້ານການເງິນ ເພື່ອກຳນົດການມີສິດໄດ້ຮັບ ແລະ ການຊ່ວຍເຫຼືອໃນການສະໝັກ.

*ຄົນເຈັບທີ່ມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນໃນການປິ່ນປົວ ຈະບໍ່ຖືກຮຽກເກັບຄ່າບໍລິການເກີນຈຳນວນເງິນທີ່ໄດ້ຖືກຮຽກເກັບທົ່ວໄປ (Amounts Generally Billed, AGB) ສຳລັບການປິ່ນປົວສຸກເສີນ ຫຼື ມີຄວາມຈຳເປັນທາງການແພດອື່ນໆ. ເຂົ້າເບິ່ງ kp.org/mfa/wa ສຳລັບຂໍ້ມູນກ່ຽວກັບ AGB.*

**Kaiser Permanente ມີການຄັດເລືອກຄົນເຈັບ ສຳລັບການມີສິດເຂົ້າຮ່ວມໂຄງການຂອງລັດ ແລະ ເອກະຊົນບໍ?**

Kaiser Permanente ໃຫ້ການຊ່ວຍເຫຼືອຄົນເຈັບໃນການກຳນົດໂຄງການຄຸ້ມຄອງສຸຂະພາບຂອງລັດ ແລະ ເອກະຊົນທີ່ເປັນໄປໄດ້ ທີ່ອາດຈະຊ່ວຍໃນການເຂົ້າເຖິງຄວາມຕ້ອງການໃນການດູແລສຸຂະພາບ. ຄົນເຈັບທີ່ຖືກພິຈາລະນາວ່າມີເງື່ອນໄຂເຂົ້າຮ່ວມໂຄງການຄຸ້ມຄອງສຸຂະພາບຂອງລັດ ຫຼື ເອກະຊົນໃດໜຶ່ງ ແມ່ນຕ້ອງໄດ້ສະໝັກ ເຂົ້າໃນໂຄງການເຫຼົ່ານັ້ນ.

**ໂຄງການໃຫ້ການຄຸ້ມຄອງຫຍັງແດ່?**

ໂຄງການ ການຊ່ວຍເຫຼືອດ້ານການເງິນທາງການແພດ ຄຸ້ມຄອງການປິ່ນປົວທີ່ຈຳເປັນທາງການແພດທີ່ສະໜອງໃຫ້ຢູ່ທີ່ສຳນັກງານທາງການແພດ, ໂຮງໝໍ ,ຮ້ານຂາຍຢາຂອງ Kaiser Permanente ຫຼື ທີ່ສະໜອງໃຫ້ໂດຍຜູ້ໃຫ້ບໍລິການປິ່ນປົວຂອງ Kaiser Permanente. ປະເພດການບໍລິການຕ່າງໆທີ່ບໍ່ໄດ້ຮັບການຄຸ້ມຄອງປະກອບມີ ການບໍລິການທີ່ບໍ່ໄດ້ຮັບການພິຈາລະນາວ່າເປັນກໍລະນີສຸກເສີນ ຫຼື ຈຳເປັນທາງການແພດ ໂດຍຜູ້ໃຫ້ບໍລິການປິ່ນປົວຂອງ Kaiser Permanente, ການບໍລິການຮັກສາການມີບຸດຍາກ ແລະ ການອຸ້ມບຸນ ພ້ອມທັງເບ້ຍປະກັນການດູແລສຸຂະພາບ. ກະລຸນາເບິ່ງບັນຊີລາຍຊື່ທັງໝົດເພີ່ມຕື່ມໃນນະໂຍບາຍຂອງ MFA.

**ມີການຊ່ວຍເຫຼືອດ້ານພາສາບໍ?**

ມີນາຍແປພາສາໃຫ້ທ່ານໂດຍບໍ່ເສຍຄ່າ. ຖ້າທ່ານຕ້ອງການລົມກັບບຸກຄົນໃດໜຶ່ງ ໂດຍມີການຊ່ວຍເຫຼືອຈາກນາຍແປພາສາ, ກະລຸນາໂທຫາຝ່າຍບໍລິການສະມາຊິກໄດ້ທີ່ 1-888-901-4636 (TTY: **711**) ຫຼື ເຂົ້າເບິ່ງເວັບໄຊຂອງພວກເຮົາໄດ້ທີ່ kp.org/mfa/wa.

**Kaiser Permanente ມີນະໂຍບາຍກ່ຽວກັບການຊ່ວຍເຫຼືອດ້ານການເງິນບໍ?**

ທ່ານອາດຈະຂໍເອົານະໂຍບາຍຂອງ ການຊ່ວຍເຫຼືອດ້ານການເງິນທາງການແພດ ຂອງ Kaiser Permanente ສະບັບສຳເນົາຂອງທ່ານໂດຍບໍ່ເສຍຄ່າໂດຍການໂທຫາ 1-888-901-4636 (TTY: **711**), ສົ່ງຈົດໝາຍທາງອີເມວໄປທີ່ medfinassist@kp.org, ຫຼື ເຂົ້າເບິ່ງເວັບໄຊຂອງພວກເຮົາໄດ້ທີ່ kp.org/mfa/wa.

**ຕ້ອງການຄວາມຊ່ວຍເຫຼືອບໍ?**

ສຳລັບການຊ່ວຍເຫຼືອ ຫຼື ສອບຖາມກ່ຽວກັບຂັ້ນຕອນການສະໝັກ ການຊ່ວຍເຫຼືອດ້ານການເງິນທາງການແພດ, ກະລຸນາໂທ 1-800-442-4014 (TTY: **711**) ຫຼື ພະນັກງານທີ່ຫ້ອງການດຳເນີນທຸລະກິດໃດໜຶ່ງຂອງ Kaiser Permanente ຫຼື ບ່ອນເຊັກອິນ.

**ຂ້າພະເຈົ້າຈະສະໝັກໄດ້ແນວໃດ?**

ທ່ານສາມາດສະໝັກການຊ່ວຍເຫຼືອດ້ານການເງິນທາງການແພດ ບໍ່ວ່າຈະເປັນທາງອອນລາຍ ຫຼື ຕິດຕໍ່ສະມາຊິກຜູ້ໃຫ້ບໍລິການ.

ຂໍ້ມູນໂຄງການການຊ່ວຍເຫຼືຂໍ້ມູນໂຄງການ MFA ແມ່ນມີຢູ່ຈາກແຫຼ່ງຕ່າງໆໃດໜຶ່ງດັ່ງຕໍ່ໄປນີ້:

- ທາງອອນລາຍ ທີ່ kp.org/mfa/wa
- ພະນັກງານທີ່ຫ້ອງການດຳເນີນທຸລະກິດໃດໜຶ່ງຂອງ Kaiser Permanente ຫຼື ບ່ອນເຊັກອິນ
- ໂທຫາ 1-800-442-4014 (TTY: **711**)
- ທາງໄປສະນີ (ໂດຍບໍ່ເສຍຄ່າ) ທີ່ medfinassist@kp.org
- ດາວໂຫຼດໃບຄຳຮ້ອງຂໍສະໝັກຜ່ານເວັບໄຊຊຸມຊົນຂອງ Kaiser Permanente ທີ່ kp.org/mfa/wa.

ກະລຸນາສົ່ງໃບສະໝັກທີ່ຕື່ມຂໍ້ມູນໃສ່ຄົບຖ້ວນແລ້ວ (ລວມທັງເອກະສານ ແລະ ຂໍ້ມູນທີ່ຕ້ອງການທັງໝົດທີ່ລະບຸໄວ້ໃນຄຳແນະນຳໃນການສະໝັກ) ກັບຄືນ:

- ສົ່ງດ້ວຍຕົນເອງໄປທີ່ຫ້ອງການດຳເນີນທຸລະກິດໃດໜຶ່ງຂອງ
- Kaiser Permanente ທີ່ຢູ່ໃກ້ທີ່ສຸດ ຫຼື ບ່ອນເຊັກອິນ
- ສົ່ງທາງໄປສະນີໄປທີ່: Kaiser Permanente,<br>MFA Program, P.O. Box 34584, Seattle,<br>WA 98124-1584
- ສົ່ງແຟັກເຖິງ 1-206-877-0640

Kaiser Permanente ຈະກວດກາບັນດາຄຳຮ້ອງຂໍສະໝັກທີ່ສົ່ງມາເມື່ອຕື່ມຂໍ້ມູນໃສ່ຄົບຖ້ວນແລ້ວ ແລະ ຈະຕັດສິນວ່າທ່ານມີສິດໄດ້ຮັບຕາມນະໂຍບາຍຂອງ ການຊ່ວຍເຫຼືອດ້ານການເງິນທາງການແພດ ຂອງ Kaiser Permanente ຫຼື ບໍ່. ຄຳຮ້ອງຂໍສະໝັກທີ່ບໍ່ຄົບຖ້ວນອາດຈະເຮັດໃຫ້ການດຳເນີນການ ຫຼື ການປະຕິເສດຄຳຮ້ອງຂໍສະໝັກ MFA ຂອງທ່ານມີຄວາມລັກຊ້າ, ແຕ່ Kaiser Permanente ຈະແຈ້ງໃຫ້ບັນດາຜູ້ສະໝັກຊາບ ແລະ ໃຫ້ໂອກາດໃນການສົ່ງເອກະສານ ຫຼື ຂໍ້ມູນທີ່ຂາດຫາຍໄປ ພາຍໃນກຳນົດເວລາທີ່ກຳນົດໄວ້.

©2022 Kaiser Foundation Hospital;
Kaiser Foundation Health Plan of Washington